ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ ໒໔໒ /ນຍ

ນະຄອນຫຼວງວຽງຈັນ, ວັນທີ ໗ ກັນຍາ 2011

# ດຳລັດ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ

## ຂອງ ກະຊວງສຶກສາທິການ ແລະ ກິລາ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ແຫ່ງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 02/ສພຊ, ລົງວັນທີ 6 ພຶດສະພາ 2003;
- ອີງຕາມ ກົດໝາຍວ່າດ້ວຍການສຶກສາ (ສະບັບປັບປຸງ) ສະບັບເລກທີ 04/ສພຊ, ລົງວັນທີ 3 ກໍລະກົດ 2007 ແລະ ກົດໝາຍວ່າດ້ວຍກິລາ-ກາຍະກຳ ສະບັບເລກທີ 11/ສພຊ, ລົງວັນທີ 25 ທັນວາ 2007;
- ອີງຕາມ ການສະເໜີຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 733/ສສກ.ຈຕ, ລົງວັນທີ 17 ສິງຫາ 2011.
- ອີງຕາມ ການສະເໜີ ຂອງລັດຖະມົນຕີວ່າການກະຊວງພາຍໃນ ສະບັບເລກທີ 29/ພນ, ລົງວັນທີ 01 ກັນຍາ 2011.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ I

## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ກຳນົດ ທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກ ຂອງກະຊວງສຶກສາທິການ ແລະ ກິລາ, ເພື່ອເປັນບ່ອນອີງໃນການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງຂະແໜງການສຶກສາທິການ ແລະ ກິລາ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ເຂົ້າໃນການຄຸ້ມຄອງ, ກວດກາ, ຊຸກຍູ້, ສົ່ງເສີມ ແລະ ພັດທະນາການສຶກສາ ແລະ ກິລາແຫ່ງຊາດ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງສຶກສາທິການ ແລະກິລາ ຊຶ່ງມດ້ວຍຕົວອັກສອນຫຍໍ້ວ່າ **"ສສກ"** ແມ່ນອົງການຄຸ້ມຄອງລັດຂັ້ນສູນກາງ ເປັນກະຊວງໜຶ່ງທີ່ສັງກັດໃນໂຄງປະກອບກົງຈັກ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ກ່ຽວກັບວຽກງານການສຶກສາທິການ ແລະກິລາ; ເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ ໃຫ້ເປັນພົນລະເມືອງດີ, ມີຄຸນສົມບັດສິນທຳປະຕິວັດ, ມີຄວາມຮູ້ຄວາມສາມາດ, ມີສຸຂະພາບແຂງແຮງ ຕາມຫ້າຫຼັກມູນ ແລະ ສາມລັກສະນະຂອງການສຶກສາແຫ່ງຊາດ.

## ໝວດທີ II
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

ກະຊວງສຶກສາທິການ ແລະ ກິລາມີໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ ແລະ ສະເໜີ ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນງານ, ໂຄງການ ກ່ຽວກັບການພັດທະນາການສຶກສາ ແລະ ກິລາແຫ່ງຊາດ ຕໍ່ລັດຖະບານ;
2. ສ້າງ, ປັບປຸງນິຕິກຳຕ່າງໆ ກ່ຽວກັບວຽກງານຄຸ້ມຄອງ-ບໍລິຫານການສຶກສາ ແລະ ກິລາ ເພື່ອນຳສະເໜີ ໃຫ້ລັດຖະບານຮັບຮອງ;
3. ເຜີຍແຜ່ ແຜນຍຸດທະສາດ, ແຜນນະໂຍບາຍ, ແຜນງານ, ໂຄງການພັດທະນາການສຶກສາ ແລະ ກິລາ ທີ່ໄດ້ຮັບຮອງຈາກລັດຖະບານ ແລະ ຊີ້ນຳ, ນຳພາ ໃນການຈັດຕັ້ງປະຕິບັດ;
4. ຄົ້ນຄວ້າ, ປັບປຸງ, ຂະຫຍາຍການຈັດຕັ້ງ ແລະ ການຄຸ້ມຄອງ ຂອງຂະແໜງການສຶກສາ ແລະ ກິລາ ໃນຂອບເຂດທົ່ວປະເທດ ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ຂອງລັດຖະບານໃນແຕ່ລະໄລຍະ;
5. ບັນຈຸ, ສັບຊ້ອນ, ກໍ່ສ້າງ, ບຳລຸງ ແລະ ປະຕິບັດນະໂຍບາຍ ຕໍ່ພະນັກງານ, ລັດຖະກອນ ຂອງຂະແໜງການສຶກສາ ແລະ ກິລາ;
6. ສ້າງ ແລະ ຄຸ້ມຄອງ ມາດຕະຖານ ຂອງການສຶກສາ ແລະ ກິລາແຫ່ງຊາດ ໃຫ້ມີຄຸນນະພາບເທົ່າທຽມກັບພາກພື້ນ ແລະ ສາກົນ ເທື່ອລະກ້າວ;
7. ປະສານສົມທົບກັບກະຊວງ, ອົງການທຽບເທົ່າກະຊວງ, ຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບການພັດທະນາການສຶກສາ ແລະ ກິລາແຫ່ງຊາດ;
8. ຄຸ້ມຄອງງົບປະມານ, ການເງິນ ແລະ ຊັບສິນ ຂອງຂະແໜງການສຶກສາ ແລະ ກິລາ ຕາມລະບຽບກົດໝາຍຂອງລັດ;

9. ດຳເນີນການກວດກາ, ກວດການ, ຕິດຕາມ, ປະເມີນຜົນການປະຕິບັດແຜນພັດທະນາການສຶກສາ ແລະ ກິລາ ຂອງຊາດ ໃນແຕ່ລະໄລຍະ;
10. ພົວພັນ, ຮ່ວມມືກັບຕ່າງປະເທດ, ອົງການຈັດຕັ້ງສາກົນ ແລະ ພາກພື້ນ ກ່ຽວກັບວຽກງານ ການສຶກສາ ແລະ ກິລາ;
11. ປະຕິບັດໜ້າທີ່ອື່ນໆ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 4. ຂອບເຂດສິດ**

ກະຊວງສຶກສາທິການ ແລະ ກິລາ ມີຂອບເຂດສິດ ດັ່ງນີ້:

1. ສະເໜີຕໍ່ລັດຖະບານພິຈາລະນາຮັບຮອງ ແຜນຍຸດທະສາດ, ແຜນງານ, ໂຄງການລະດັບຊາດ ແລະ ແຜນງົບປະມານ ເພື່ອການພັດທະນາການສຶກສາ ແລະ ກິລາແຫ່ງຊາດ;
2. ສະເໜີຕໍ່ລັດຖະບານ ພິຈາລະນາ ອະນຸມັດ, ປັບປຸງ, ສ້າງ ຫຼື ຍົກເລີກບັນດານິຕິກຳ ໃນການຄຸ້ມຄອງລັດ ກ່ຽວກັບຂະແໜງການສຶກສາ ແລະ ກິລາແຫ່ງຊາດ;
3. ສະເໜີລັດຖະບານພິຈາລະນາ ອະນຸມັດ, ການສ້າງຕັ້ງ ຫຼື ຍົກເລີກກົງຈັກການຈັດຕັ້ງ ຂອງກະຊວງ ສຶກສາທິການ ແລະ ກິລາ, ສະຖາບັນການສຶກສາລະດັບມະຫາວິທະຍາໄລ, ຄະນະກຳມະການ ກິລາໂອແລມປິກແຫ່ງຊາດ, ສະພາທີ່ປຶກສາການສຶກສາ ແລະ ກິລາແຫ່ງຊາດ ;
4. ອອກນິຕິກຳ, ສັ່ງໂຈະ ຫຼື ລຶບລ້າງ ບັນດານິຕິກຳ ຂອງຂະແໜງການສຶກສາທິການ ແລະ ກິລາ ໃນ ຂອບເຂດທົ່ວປະເທດຕາມການແບ່ງຂັ້ນຄຸ້ມຄອງ;
5. ສ້າງຕັ້ງ, ຍົກເລີກ ກົງຈັກການຈັດຕັ້ງຄຸ້ມຄອງບໍລິຫານ ຂອງຂະແໜງການສຶກສາ ແລະ ກິລາ ຂັ້ນແຂວງ, ນະຄອນ, ເມືອງ, ເທດສະບານ, ວິທະຍາໄລ ແລະ ສະຖາບັນທຽບເທົ່າວິທະຍາໄລ, ໂຮງຮຽນ ອາຊີວະສຶກສາ, ຫົວໜ່ວຍການຜະລິດ, ສູນ, ສະຫະພັນກິລາແຫ່ງຊາດ ປະເພດຕ່າງໆ;
6. ສະເໜີລັດຖະບານ ແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ ຜູ້ບໍລິຫານການສຶກສາ ແລະ ກິລາ ຕາມ ລະບຽບກົດໝາຍ;
7. ແຕ່ງຕັ້ງ, ປົດຕຳແໜ່ງ, ຍົກຍ້າຍ, ຜູ້ບໍລິຫານ ແລະ ພະນັກງານ ທີ່ຢູ່ໃນຄວາມຮັບຜິດຊອບ ຂອງ ກະຊວງສຶກສາທິການ ແລະ ກິລາ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ລະບຽບກົດໝາຍ;
8. ຄຸ້ມຄອງນຳໃຊ້ ງົບປະມານ, ວັດຖຸ-ຊັບສິນ, ກອງທຶນ ແລະ ທຶນຊ່ວຍເຫຼືອລ້າປະເພດຕ່າງໆ ຕາມ ລະບຽບກົດໝາຍ;
9. ພົວພັນ, ຮ່ວມມື, ເຊັນສັນຍາ ກ່ຽວກັບການສຶກສາ ແລະ ກິລາ ກັບຕ່າງປະເທດ, ອົງການ ຈັດຕັ້ງສາກົນ, ບຸກຄົນ ຫຼື ນິຕິບຸກຄົນ ຕາມລະບຽບກົດໝາຍ ແລະ ຕາມການມອບໝາຍ ຂອງລັດຖະບານ;
10. ສະເໜີ ລັດຖະບານ ເພື່ອຈັດຕັ້ງການແຂ່ງຂັນ ດ້ານການສຶກສາ ແລະ ກິລາ ລະດັບຊາດ ແລະ ສາກົນ;

11. ຈັດຕັ້ງ ແລະ ດຳເນີນການແຂ່ງຂັນດ້ານການສຶກສາ ແລະ ກິລາ ປະເພດຕ່າງໆ ຕາມໜ້າທີ່ ແລະ ພາລະບົດບາດ ຂອງຂະແໜງການ;
12. ດຳເນີນການກວດກາ, ກວດການ, ປົກປ້ອງ, ຄຸ້ມຄອງບຸກຄະລາກອນ, ຊັບສິນ, ລິຂະສິດທາງດ້ານການສຶກສາ ແລະ ກິລາ ຂອງຊາດ;
13. ປະສານສົມທົບກັບກະຊວງ, ອົງການທຽບເທົ່າກະຊວງ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນ ກ່ຽວກັບວຽກງານການສຶກສາ ແລະ ກິລາ ຕາມສາຍຕັ້ງ ແລະ ສາຍຂວາງ;
14. ຕົກລົງ, ອະນຸມັດ, ຮັບຮອງ ຫຼັກສູດການສຶກສາລະດັບຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍການສຶກສາ ມາດຕາ 31. ຄຸ້ມຄອງ, ຕິດຕາມ, ກວດກາ ທາງວິຊາການ ສະຖາບັນການສຶກສາລະດັບຕ່າງໆ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ.
15. ປະຕິບັດສິດອື່ນໆ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ III
## ໂຄງປະກອບການຈັດຕັ້ງ

**ມາດຕາ 5. ໂຄງປະກອບກົງຈັກ**

ໂຄງປະກອບກົງຈັກ ຂອງກະຊວງສຶກສາທິການ ແລະ ກິລາ ມີດັ່ງນີ້:

**5.1 ຂັ້ນສູນກາງ:**

1) ຫ້ອງການກະຊວງສຶກສາທິການ ແລະ ກິລາ;
2) ກົມຈັດຕັ້ງ ແລະ ພະນັກງານ;
3) ກົມພົວພັນຕ່າງປະເທດ;
4) ກົມແຜນການ;
5) ກົມການເງິນ;
6) ກົມກວດກາ;
7) ກົມອະນຸບານ ແລະ ປະຖົມສຶກສາ;
8) ກົມມັດທະຍົມສຶກສາ;
9) ກົມສ້າງຄູ;
10) ກົມອາຊີວະສຶກສາ;
11) ກົມການສຶກສາຊັ້ນສູງ;
12) ກົມການສຶກສານອກໂຮງຮຽນ;
13) ກົມພະລະ ແລະ ສິລະປະສຶກສາ;
14) ກົມກິດຈະການນັກສຶກສາ;

15) ກົມກິລາລະດັບສູງ;

16) ກົມກິລາມວນຊົນ;

17) ຫ້ອງການເລຂາຄະນະກຳມາທິການແຫ່ງຊາດ ເພື່ອອຸຍແນດສະໂກ;

18) ຫ້ອງການປະສານງານຄະນະກຳມາການກິລາໂອແລມປິກແຫ່ງຊາດ;

19) ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ;

20) ສະຖາບັນພັດທະນາການບໍລິຫານການສຶກສາ.

ນອກຈາກນັ້ນ ຍັງມີ ຫົວໜ່ວຍການຈັດຕັ້ງວິຊາການ ຈຳນວນໜຶ່ງ ຕາມການຕົກລົງ ຂອງລັດຖະມົນຕີວ່າການກະຊວງສຶກສາ ແລະ ກິລາ.

### 5.2 ຂັ້ນທ້ອງຖິ່ນປະກອບດ້ວຍ:

1) ພະແນກສຶກສາທິການ ແລະ ກິລາແຂວງ, ນະຄອນ ;

2) ຫ້ອງການສຶກສາທິການ ແລະ ກິລາເມືອງ, ເທດສະບານ.

## ມາດຕາ 6. ອົງການທີ່ປຶກສາ

ກະຊວງສຶກສາທິການ ແລະ ກິລາ ມີ ຄະນະກຳມາທິການ; ສະພາທີ່ປຶກສາລະດັບຊາດ ຈຳນວນໜຶ່ງ ຊຶ່ງສ້າງຕັ້ງຂຶ້ນຕາມຄວາມຈຳເປັນ ຂອງວຽກງານການສຶກສາ ແລະ ກິລາ ໂດຍການຕົກລົງເຫັນດີຂອງລັດຖະບານ.

## ມາດຕາ 7. ໂຄງປະກອບບຸກຄະລາກອນ

### 7.1 ຂັ້ນສູນກາງ:

1) ກະຊວງສຶກສາທິການ ແລະ ກິລາ ມີລັດຖະມົນຕີວ່າການເປັນຫົວໜ້າກະຊວງ, ເປັນສະມາຊິກລັດຖະບານ, ມີຄວາມຮັບຜິດຊອບ ຕໍ່ນາຍົກລັດຖະມົນຕີ ໃນການຄຸ້ມຄອງ-ບໍລິຫານການສຶກສາ ແລະ ກິລາແຫ່ງຊາດ ຕາມພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດ ທີ່ກຳນົດໄວ້ໃນດຳລັດສະບັບນີ້;

2) ກະຊວງສຶກສາທິການ ແລະ ກິລາ ມີລັດຖະມົນຕີຊ່ວຍວ່າການຈຳນວນໜຶ່ງ ຊຶ່ງເປັນຜູ້ຊ່ວຍວຽກລັດຖະມົນຕີວ່າການ ແລະຮັບຜິດຊອບວຽກງານຕາມການມອບໝາຍ ຂອງລັດຖະມົນຕີວ່າການ;

3) ກະຊວງສຶກສາທິການ ແລະ ກິລາ ມີ ຫົວໜ້າ ແລະ ຮອງຫ້ອງການ, ຫົວໜ້າ ແລະ ຮອງຫົວໜ້າກົມ, ຫົວໜ້າ ແລະ ຮອງອົງການເທົ່າກົມ.

### 7.2 ຂັ້ນທ້ອງຖິ່ນ:

1) ພະແນກສຶກສາທິການ ແລະ ກິລາ ແຂວງ, ນະຄອນ ມີ ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ມີຫົວໜ້າຂະແໜງ ແລະ ຮອງຫົວໜ້າຂະແໜງຈຳນວນໜຶ່ງ;